ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000🕮000===-----

ແຂວງ ຈຳປາສັກ

ເລກທີ 358 /ຈຂ, ຈສ.

ປາກເຊ, ວັນທີ 5 / 4 / 2016.

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງນາມມະຍົດບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ

- ອີງຕາມ ຄຳສັ່ງແນະນຳເລກທີ 03/ກມສພ ວ່າດ້ວຍການສ້າງບ້ານເປັນຫົວໜ່ວຍພັດທະນາ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ.
- ອີງຕາມດຳລັດ 309/ນຍ, ລົງວັນທີ 14 ພະຈິກ 2013 ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ.
- ອີງຕາມ ໃບສະເໜີ ຂອງຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຂວງ ສະບັບເລກທີ 103 /ຫພທຂ, ລົງວັນທີ 28 / 03 /2016.

### ເຈົ້າແຂວງ ຈຳປາສັກຕົກລົງ:

**ມາດຕາ 1:** ຮັບຮອງເອົາ **ບ້ານ ໜອງໄຮໂຄກ** ເມືອງໂພນທອງ ແຂວງຈຳປາສັກ ເປັນບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ.

**ມາດຕາ 2:** ພະແນກການ, ກົມກອງ ພາກສ່ວນທີ່ກ່ຽວຂ້ອງ, ພໍ່ແມ່ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ຢ່າງເປັນທາງການ ແລະ ມອບໃຫ້ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຂວງ, ເຈົ້າເມືອງໆ ໂພນທອງ ຈັດພິທີປະກາດຮັບຮອງບ້ານດັ່ງກ່າວຢ່າງສົມກຽດ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງໆ ຈຳປາສັກ

ບົວສອນ ວົງສອງຄອນ